G0107:10
T13/ no. 2

# ຂ່າວສານຊາວໄທດຳໃນໄອໂອວາ

## TAI DAM NEWSLETTER #2

<u>ຄວາມຈື່ຈຳ</u>..... <u>ການຈົດທະບຽນຂອງຊາວຕ່າງດ້າວ</u>!

ຊາວຕ່າງດ້າວທຸກຄົນຈຳຕ້ອງໄປຈົດທະບຽນກັບພະແນກກວດຄົນເຂົ້າເມືອງແລະທັດສັນຊາດໃນເດືອນມະກະຣາ (1) ຂອງແຕ່ລະປີ. ວິທີລົງທະບຽນດັ່ງກ່າວເປັນຂອງງ່າຍໆ. ຢູ່ຕາມໂຮງສາງແຕ່ລະບ່ອນ ມີແບບຟອມຈົດທະບຽນ AR-11. ຂໍໃຫ້ຕອບແບບຟອມນັ້ນສຳລັບແຕ່ລະຄົນ ແລ້ວສົ່ງໄປຍັງ: Immigration + Naturalization Service, Room 8411, U.S. Post Office and Court House, 215 North 17th Street, Omaha, Nebraska. ການລົງທະບຽນດັ່ງກ່າວຈະໃຊ້ເວລາບໍ່ເທົ່າໃດ. ຖ້າພວກທ່ານບໍ່ເຂົ້າໃຈ ຕິດຕໍ່ຖາມລາຍລະອຽດນຳທ່ານ Tom Munoz ທີ່ສູນການຮັບຮອງຊາວໄທດຳ ຫຼືຂຽນຫາພະແນກກວດຄົນເຂົ້າເມືອງແລະທັດສັນຊາດ ທີ່ Omaha ໂດຍກົງກໍໄດ້.

<u>ການຍົກເວັ້ນພາສີສຳລັບພວກຜູ້ຮັບຮອງ</u>

ພະແນກຊັບພະຍາກອນພາຍໃນ (IRS) ໄດ້ແຈ້ງໃຫ້ຊາບວ່າພວກຄອບຄົວຜູ້ຮັບຮອງຊາວອົບພະຍົບອິນໂດຈີນສາມາດຫັກລາຍຈ່າຍຕ່າງໆອອກຈາກຈຳນວນລາຍໄດ້ທີ່ຕ້ອງເສຍພາສີ ກໍລາຍຈ່າຍເຫຼົ່ານັ້ນເປັນລາຍຈ່າຍໃນການສົງເຄາະແກ່ຊາວອົບພະຍົບ. ຕາມກົດໝາຍແລ້ວ, ການສົງເຄາະຫຼືການບໍລິຈາກໃຫ້ແກ່ຄະນະກຳມະການໂບດ (ວັດ) ທີ່ໃຫ້ຄວາມອຸ້ມຊູຊາວອົບພະຍົບ ຮວມທັງລາຍຈ່າຍຕ່າງໆ ທີ່ຄອບຄົວຜູ້ຮັບຮອງໄດ້ຈ່າຍອອກຈາກຖົງເງິນຂອງເອງ ເຊັ່ນ ອາຫານການກິນ, ເຄື່ອງນຸ່ງຮົ່ມຕ່າງໆໃຫ້ຊາວອົບພະຍົບ.

ກົດໝາຍໄດ້ບົ່ງໄວ້ອີກວ່າ ກ່ອນຄອບຄົວໃດຈະສາມາດໄລ່ຈຳນວນຄົນທີ່ບໍ່ເປັນເຊື້ອສາຍດຽວກັນເຂົ້າໃສ່ຮ່ວມຄອບຄົວຕົນ ຈຳນວນຜູ້ມາຢູ່ນຳນັ້ນຈະຕ້ອງໄດ້ຢູ່ນຳຈົນໃຫ້ໝົດປີ. ຊາວອົບພະຍົບຊຶ່ງບໍ່ເປັນເຊື້ອສາຍຂອງຄອບຄົວຜູ້ຮັບຮອງ ຖ້າຫາກບໍ່ໄດ້ຢູ່ນຳຕລອດປີ ແລ້ວຈະຖືວ່າເປັນວ່າພວກທີ່ຕົນ

A REMINDER . . . . ALIEN REGISTRATION !!

All aliens must register with Immigration and Naturalization Service during January of each year. The procedure is simple. Any U. S. Post Office has the AR-11 registration form. Fill out the card and mail it to: I.N.S. Office, Room 8411, U. S. Post Office and Court House, 215 North 17th Street, Omaha, Nebraska. It takes only a few minutes to complete the form. If you have questions call Tom Munoz at Task Force Headquarters or write to I.N.S. in Omaha.

TAX BREAK FOR SPONSORS

The Internal Revenue Service (IRS) has announced that sponsors of Indochinese refugees will be able to deduct certain refugee-related expenses as charitable contributions.

Under the law, the ruling on charitable contributions applies to donations to church committees that support refugees, as well as to the sponsor's own out-of-pocket expenses for food, clothing and incidentals for refugees he or she has taken into his or her home.

The law requires that an unrelated person being claimed as a dependent must live

ລ້ຽງເກືອບໍ່ໄດ້. ໃນທີ່ສຸດ, ເຖິງແມ່ນວ່າຊາວອົພຍົບໄດ້ອະນຸຍາດໃຫ້ເຂົ້າມາຢູ່ໃນສະຫະຣັດໃນການພິເສດກໍ່ຕາມ ແຕ່ວ່າຜແນກຊັບພາກອນພາຍໃນນິຕິເກນໄວ້ວ່າ ຊາວອົພຍົບເປັນຊາວຕ່າງດ້າວປະຈໍາ ແລະຈະຕ້ອງເສັຽພາສີລາຍໄດ້ຄືກັນ ຊຶ່ງໝາຍຄວາມວ່າເຂົາເຈົ້າຈະຕ້ອງເສັຽພາສີຕ່າງໆເໝືອນກັນກັບຊາວອະເມຣິກັນທັງຫລາຍເຊັ່ນດຽວກັນ.

ເພື່ອຄວາມກະຈ່າງແຈ້ງແລະລາຍລະອຽດສໍາລັບຄອບຄົວຜູ້ຮັບຮອງຊາວອົພຍົບກ່ຽວກັບບັນຫາການເສັຽພາສີລາຍໄດ້ຕ່າງໆຂອງຊາວອົພຍົບ ຂໍໃຫ້ຕິດຕໍ່ສອບຖາມໄດ້ທີ່ຫ້ອງການຊັບພາກອນພາຍໃນໄດ້.

<u>ຂ່າວຂອງຜແນກອານາມັຍ (ໃນເຂດ Des Moines.)</u>

ໂຮງພະຍາບານ Broadlawn-Polk County ທີ່ 18th and Hickman, Des Moines ຕັ້ງຂຶ້ນເພື່ອຮັບໃຊ້ຊາວເຂດ Polk County. ການເສັຽຄ່າກວດຕ່າງໆຂຶ້ນຢູ່ກັບຄວາມສາມາດຂອງແຕ່ລະຄົນຈະເສັຽໄດ້. ບຸກຄົນມາແຕ່ເຂດອື່ນສາມາດໄປປິ່ນປົວໄດ້ເໝືອນກັນ ແຕ່ຈະຕ້ອງໄດ້ຮັບອະນຸຍາດ ຫລືຫາກບຸກຄົນນັ້ນສາມາດຈະເສັຽຄ່າປິ່ນປົວທັງໝົດເອົາເອງໄດ້.

ໂຮງພະຍາບານນີ້ທັງຜແນກສຸກເສີນ ແລະຜແນກສໍາລັບຄົນເຈັບພາຍນອກ. ຜແນກສຸກເສີນນີ້ການປິ່ນປົວຄົນເຈັບທຸກໆຄົນໃນທຸກໆກໍຣະນີສຸກເສີນ. ຜແນກຄົນເຈັບພາຍນອກນີ້ໄວ້ສໍາລັບຄົນເຈັບຕ່າງໆທີ່ຕ້ອງການໃຫ້ທ່ານໝໍກວດ. ນີ້ຫ້ອງການພິເສດສໍາລັບການນັດໝາຍ. ຖ້າບໍ່ມີການນັດເອົາໄວ້, ຄົນເຈັບຈະຖືກສົ່ງໄປຍັງຜແນກສຸກເສີນ ແລະຜແນກຄົນເຈັບພາຍນອກ. ຫ້ອງຄັດເລືອກນັດໝາຍນີ້ໄວ້ສໍາລັບການກວດເລັກນ້ອຍທົ່ວໄປ, ກວດທ້ອງມານ, ກວດຄວາມສູງຂອງເລືອດຕ່າງໆເປັນຕົ້ນ.

as a member of the taxpayer's household for the entire year. As a result, even though the support, gross income, and other tests in the law are met, if a refugee unrelated to the taxpayer did not live with the taxpayer for the entire year, the dependency cannot be claimed.

The IRS has ruled that the refugees, although admitted into the U. S. as parolees, are considered resident aliens for income tax purposes. This means they are, in general, subject to taxation in the same manner as a U. S. citizen.

For answers to individual sponsor or refugee tax problems, contact your local IRS office.

<u>HEALTH SERVICES INFORMATION</u>--(Des Moines area)

The Broadlawn-Polk County Hospital at 18th and Hickman, Des Moines, serves Polk County residents primarily. The payment schedule is based on ability to pay. Residents from other counties may seek medical care if authorized by their county and/or if the individual(s) has means to pay the entire bill.

Broadlawns has both and Emergency Department and an Outpatient Clinic.

The Emergency Department provides medical treatment for all of the hospital's emergency cases. The Outpatient Clinic serves

Broadlawns ມີທັງສູນການອານາມັຍຄອບ ຄົວ ຊື່ງສູນການດັ່ງກ່າວນີ້ມີໄວ້ເພື່ອຊ່ວຍຊອກ ຫາທ່ານໝໍປະຈໍາຄອບຄົວໃຫ້ແຕ່ລະ ຄອບຄົວ ແລະຊ່ວຍຄອບຄົວໃຫ້ຮູ້ຈັກແລະ ໄດ້ໃຊ້ສູນການດັ່ງກ່າວນັ້ນຢ່າງຖືກຕ້ອງ ແລະເຕັມເມັດເຕັມໜ່ວຍ. ຖ້າພວກ ທ່ານມີບັນຫາກ່ຽວກັບການເຈັບປ່ວຍ ຕ່າງໆ ຫລືຂໍ້ຂ້ອງໃຈ ກະລຸນາຕິດຕໍ່ໄດ້ທີ່ ໂທຣ. 283-2061 ແລະຖາມຫາພແນກ ສຸກເສີນໄດ້.

ສູນການອານາມັຍ Des Moines ກໍ່ຄື ອີກສູນການໜຶ່ງທີ່ໃຫ້ການປິ່ນປົວຕ່າງໆ. ສູນການດັ່ງກ່າວຕັ້ງຂຶ້ນສໍາລັບບຸກຄົນທີ່ມີ ລາຍໄດ້ນ້ອຍ. ສູນການນີ້ມີພແນກຕ່າງໆເຊັ່ນ ການປິ່ນປົວເດັກນ້ອຍ, ການກວດສຸຂພາບ, ການກວດຕາ, ກວດຫູ, ພແນກກວດເດັກ ນ້ອຍຊື່ງເປັນຫວັດ, ຕຸ່ມຕ່າງໆ, ເຈັບຫູ, ເຈັບຄໍ, ເປັນໄອ, ເປັນພິດ, ແລະອື່ນໆ... ສູນການນີ້ມີທັງພແນກປ້ອງກັນພະຍາດ ຕ່າງໆ ເຊັ່ນ ໂຣຄຄໍຕີບຄໍຕັນ, ໂຣຄໄອ ຫືດເດັກນ້ອຍ, ພະຍາດໝາກສຸກໝາກ ໄສ ແລະພະຍາດອື່ນໆ. ຄ່າປິ່ນປົວຂຶ້ນ ຢູ່ກັບລາຍໄດ້ຂອງແຕ່ລະບຸກຄົນ. ເພື່ອ ລາຍລະອຽດເຊັ່ນ ຕິດຕໍ່ສອບຖາມໄດ້ທີ່ສູນ ການດັ່ງກ່າວເອງ. ບ່ອນຢູ່ຂອງສູນການຄື:

Des Moines Health Center
700 Sixth Avenue
Hawley Welfare Building
Des Moines, Iowa 50309

ໂທຣ. 244-1181 ຕໍ່ 265.

ອີກສູນການໜຶ່ງອີກກໍ່ຄື The Evelyn Davis Health Center ທີ່ຊາວອົບພະຍົບ ໃນເຂດ Des Moines ສ່ວນຫລາຍໄດ້ໄປ ກວດແລະປິ່ນປົວແລ້ວ. ບ່ອນຢູ່ຂອງສູນ ການຄື:

The Evelyn Davis Health Center
1154 Fifth Avenue

ໂທຣ. 283-2571 . ຂໍໃຫ້ຕິດຕໍ່ຫາທ່ານ Nate Neeley, ຜູ້ຈັດການສູນການອານາມັຍ

as a "walk-in" facility for non-emergency patients who wish to see a doctor.

Appointments can be made in the Screening Room and "walk-in" patients without appointments will be referred for treatment to either the emergency section or the Outpatient Clinic. The Screening Room is prepared to handle minor medical problems, including pregnancy tests or blood pressure checks.

Still another aspect of Broadlawns is the Family Health Center. This center is to provide the family with both a personal physician and the resources of a medical center.

If you have any medical problems or questions, call 283-2061 and ask for the Emergency Department

The Des Moines Health Center is another medical service facility. It is for low income people. Some services include well child clinic services, physical exams, vision testing, hearing testing, pediatric services (for fevers, rashes, earaches, upper respiratory infections, colds, allergies, etc.). Also included are immunization services for diphtheria, whooping cough, tetanus, polio, measles, mumps, and other diseases.

The cost varies according to income.

ເພື່ອຄວາມກະຈ່າງແຈ້ງແລະລາຍລະອຽດວ່າຢູ່ສູນການນີ້ພະແນກຫາຍັງແດ່. ທາງສູນການຮັບຮອງຊາວໄທດຳເອົາຂໍ້ແນະນຳສູນການດັ່ງກ່າວນີ້ ເພາະວ່ານີ້ຜູ້ຄົນເວົ້າວ່າສູນການດັ່ງກ່າວໃຫ້ຄວາມສະດວກສະບາຍໄດ້ຫລາຍສິ່ງຫລາຍຢ່າງ.

## ເພື່ອຄວາມກະຈ່າງແຈ້ງ

ປາກົດວ່າມີຄວາມຈົ່ມຄວາມວ່າ ແລະຄວາມເຂົ້າໃຈຜິດກ່ຽວເລື່ອງເງິນທີ່ທາງສູນການຮັບຮອງຊາວໄທດຳທີ່ທາງຣັຖບານກາງອະນຸມັດມາໃຫ້. ຜູ້ອຳນວຍການຂອງສູນການຮັບຮອງມີຄວາມຮັບຜິດຊອບຕໍ່ເງິນດັ່ງກ່າວນີ້ ແລະຈະເປັນຜູ້ຕັດສິນວ່າຄວນຈະເອົາໄປໃຊ້ຈ່າຍເພື່ອການຊ່ວຍເຫລືອຊາວໄທດຳຈຳນວນ 633 ຄົນໃນການຕັ້ງຊີວິດໃຫມ່ຂອງເຂົາເຈົ້າໃນ Iowa. ເງິນຈຳນວນດັ່ງກ່າວບໍ່ໄດ້ຫມາຍເຖິງວ່າເປັນຂອງຊາວອົພຍົບຫລືເປັນຂອງຜູ້ຮັບຮອງແຕ່ຢ່າງໃດ. ຜູ້ຮັບຮອງແລະຄອບຄົວອົພຍົບຄວນຮ່ວມໄມ້ຮ່ວມມືກັນປຶກສາຫາລືນຳກັນວ່າເງິນຈຳນວນດັ່ງກ່າວນັ້ນຄວນຈະເຫມາະສົມເອົາໄປຈ່າຍແນວໃດໄດ້ດີກ່ວາ. ເງິນຈຳນວນດັ່ງກ່າວອາດຈະເອົາໄປຈ່າຍໄດ້ຫລາຍວິທີ ຫລືບາງທີກໍ່ບໍ່ມີຄວາມຈຳເປັນຈະເອົາອອກຈ່າຍເລີຍກໍ່ເປັນໄດ້ ແຕ່ໄດ້ເອົາເຂົ້າທະນາຄານໃຫ້ເປັນທຶນຕັ້ງຊີວິດໃຫມ່ຂອງຄອບຄົວອົພຍົບເລີຍກໍ່ມີ. ແຕ່ລະຄອບຄົວອາດຈະມີວິທີໃຊ້ຈ່າຍແຕກຕ່າງກັນ, ເພາະວ່າຄວາມຕ້ອງການຂອງແຕ່ລະຄອບຄົວແຕກຕ່າງກັນ. ພາຫານະທີ່ຈະຊ່ວຍເຫລືອແຕ່ລະຄອບຄົວຂອງຜູ້ຮັບຮອງກໍ່ມີແຕກຕ່າງກັນຊຶ່ງແຕ່ລະກຸ່ມຜູ້ຮັບຮອງຈະປຽບທຽບກັນບໍ່ໄດ້. ບາງຄັ້ງຊາວອົພຍົບອາດຈະບໍ່ເຂົ້າໃຈວ່າເປັນຫຍັງເງິນທີ່ທາງສູນການໄດ້ມອບໃຫ້ກັບຜູ້ຮັບຮອງຂອງ

You are encouraged to check with the Center to see how the pay schedule would affect you.

The address is Des Moines Health Center, 700 Sixth Avenue, Hawley Welfare Building, Des Moines, Iowa 50309. Telephone: 244-1181, extension 265.

The Evelyn Davis Health Center is another medical service facility being utilized by the Des Moines area refugee families. The address is 1154 Fifth Avenue and the telephone number is 283-2571. Call Mr. Nate Neeley, the Health Center manager, and he will explain the services they have to offer. The Task Force has received good comments about the services rendered.

## CLEARING THE AIR

There has been some discussion and possibly some misunderstanding about the resettlement money allocated to the Task Force by the federal government. The Director of the Task Force is responsible for the disbursement of these funds in connection with the expenses of resettlement of the 633 Tai Dam people in Iowa. This does not mean it "belongs" to either the refugee and/or the sponsoring family and/or the sponsoring group. Cooperatively, the sponsor and the refugee family should agree on how the money provided to that particular refugee family should be

ຕົນມັນຈ່າຍໄປຫມົດແລ້ວ ແຕ່ຂອງຜູ້ອື່ນຍັງບໍ່ທັນໄດ້ຈ່າຍຈັກນ້ອຍເລີຍ. ແລະຜູ້ຮັບຮອງໄດ້ເອົາເງິນທະນາຄານໄວ້. ກ່ຽວກັບເລື່ອງນີ້ໃຫ້ທຸກຄົນເຂົ້າໃຈວ່າ ແຕ່ລະຜູ້ຮັບຮອງຂອງແຕ່ລະຄອບຄົວບໍ່ຄືກັນ ແລະບໍ່ມີທາງຈະເຮັດໃຫ້ຄືກັນໄດ້. ບາງຄອບຄົວອາດຈະບໍ່ປາກໃຫ້ຜູ້ຮັບຮອງຂອງຕົນ ຊື້ເຄື່ອງຕ່າງໆໃຫ້ ແຕ່ປາກໃຫ້ເຂົາເຈົ້າທ້ອນເງິນນັ້ນເອົາໄວ້ໃຫ້ກ່ອນ ຊື່ງການທ້ອນທອນແລະການມັທຍັດມັນເປັນສິ່ງທີ່ດີເລີດແລະຄວນສົ່ງເສີມຮັກສາເອົາໄວ້ ແຕ່ບາງຄັ້ງກໍ່ອາດຈະເຮັດບໍ່ໄດ້ດ້ວຍເງິນຊ່ວຍເຫລືອແນວນີ້ ຈົນກວ່າແຕ່ລະຄົນຈະມີລາຍໄດ້ຂອງຕົນເອງເສັຽກ່ອນ.

ເງິນທີ່ທາງສູນການຮັບຮອງເອົາຊ່ວຍເຫລືອນັ້ນແມ່ນເພື່ອເອົາໄປຊື້ເຄື່ອງຂອງຕ່າງໆອັນຈຳເປັນໃນການຕັ້ງຊີວິດໃຫມ່ຂອງຊາວໄທດຳ ແຕ່ລະຄອບຄົວຊື່ງເຣື່ອງດັ່ງກ່າວ ຜູ້ຮັບຮອງແລະຄອບຄົວຊາວອົພຍົບຂອງຕົນຄວນຈະປຶກສາຫາລືກັນດ້ວຍຄວາມຈິງໃຈຕໍ່ກັນວ່າຈະເຮັດວິທີທາງໃດໃນການຊ່ວຍເຫລືອຊອກຊ່ອງທາງໃຫ້ແຕ່ລະຄອບຄົວສາມາດຊ່ວຍເຫລືອຕົນເອງໄດ້.

<u>ການຮຽນພາສາອັງກິດຂອງຜູ້ໃຫຍ່</u>

ສຳລັບຄອບຄົວໃດທີ່ຢູ່ເຂດ Des Moines ຂໍໃຫ້ຕິດຕໍ່ທີ່ Whittier School, E. 14th and Washington, ໂທຣ. 262-5018 ຫລືທີ່ Roosevelt High School, 4419 Center Street.

ສຳລັບຄອບຄົວທີ່ຢູ່ນອກເຂດ Des Moines, ຂໍໃຫ້ຕິດຕໍ່ສອບຖາມທີ່ Area Education Agency, ພະແນກການສຶກສາຜູ້ໃຫຍ່ ຂອງ Iowa

spent. The money is being spent in many different ways -- or is not being spent at all but is being banked for the future use of the refugee family. Each family is different, their needs are different, sponsors' resources are different, all resulting in patterns of expenditures that cannot be compared with one another. It may be difficult for one refugee family to understand why their money has been spent while the family of a relative may have money in the bank, but there is no way that refugee placements can be identical with one another. A refugee family may be unwilling to have the sponsor purchase certain necessities with the money, preferring instead to save the money as their friend or relative has been able to do. The savings habit is admirable and is to be encouraged, but this is not often possible in this resettlement effort until the wage earners are employed. The money is intended to buy those items necessary for the Tai Dam families to begin independent lives and this matter should be discussed in a frank and open manner by sponsors and their refugee families.

<u>ADULT ENGLISH CLASSES</u>

Des Moines area - Contact Whittier School, E. 14th & Washington, phone 262-5018,

Department of Public Instruction.

ຄຳຖແລງຂອງຜູ້ອຳນວຍການ

ມະກະຣາ (1) 2, 1976

ສະບາຍດີປີໃຫມ່!

ການຈັດຕັ້ງຂອງສູນກາງຮັບຮອງຊາວອົພະຍົບໄດ້ມີການປ່ຽນແປງເລັກນ້ອຍ ຊຶ່ງພວກຂ້າພະເຈົ້າຢາກໃຫ້ພວກທ່ານທັງຫລາຍຮູ້ນຳ. ພວກທ່ານຄົງຈະຮູ້ດີແລ້ວວ່າເຈົ້າໜ້າທີ່ຈຳນວນສີ່ທ່ານຂອງສູນກາງນັ້ນເປັນເຈົ້າໜ້າທີ່ຂອງຣັດ Iowa. ກ່ອນຈະມາເຮັດວຽກກ່ຽວກັບການຊ່ວຍເຫລືອຊາວອົພະຍົບນັ້ນ ແມ່ນ Governor Ray ຊຶ່ງເປັນເຈົ້າຣັດ Iowa ໄດ້ມອບໝາຍໃຫ້ມາເຮັດ. ເຖິງເວລາແລ້ວທີ່ພວກຂ້າພະເຈົ້າຈະໄດ້ກັບຄືນໄປເຮັດວຽກເກົ່າຢ່າງເຕັມເວລາຂອງພວກຂ້າພະເຈົ້າທີ່ສຳນັກງານປະກັນແຮງງານ ຊຶ່ງສີ່ຄົນນັ້ນມີ Jill Guam, Dick Freeman, Jack Spear ແລະຂ້າພະເຈົ້າເອງ. ກະຣຸນາຢ່າໄດ້ເຂົ້າໃຈຜິດໄປວ່າ ພວກຂ້າພະເຈົ້າບໍ່ໄດ້ຫລືຫມົດຄວາມສົນໃຈນຳໂຄງການອົພະຍົບແຕ່ຢ່າງໃດ ເມື່ອໃດພວກຂ້າພະເຈົ້າຂໍໃຫ້ພວກທ່ານປຶກສາຫາລືນຳ ຍາ Tom ຫລື ຍາສົມສັກ ຍາມທີ່ພວກທ່ານຕໍ່ສາຍມາຫາສູນກາງ.

ສູນກາງຮັບຮອງຊາວອົພະຍົບຈະມີຢູ່ຕໍ່ໄປ... ແລະຂ້າພະເຈົ້າໃນຖານະເປັນຜູ້ອຳນວຍການກໍຈະສືບຕໍ່ມີຄວາມຜິດຊອບຕາມການຕິດຕໍ່ກັບຣັຖບານກາງນັ້ນໄປທີ່ກ່ຽວກັບການຕັ້ງຖິ່ນໃຫມ່ຂອງຊາວອົພະຍົບຕໍ່ໄປ. ບ່ອນເຮັດການຂອງສູນກາງມີການປ່ຽນແປງ ແລະເບີໂທຣະສັບໃຫມ່. ຍາ Tom Munoz ແລະຍາ

or Roosevelt High School, 4419 Center Street.

Other areas - Contact nearest Area Education Agency, Division of Adult Education, Iowa Department of Public Instruction.

MESSAGE FROM THE DIRECTOR

January 2, 1976

Happy New Year! Som-bý-dee Pee-mý!

The organizational structure of the Task Force is changing and we want you to know about it. Remember that four of the six Task Force members are State of Iowa employees and that we have been "donated" by Governor Ray to accomplish the resettlement of the refugees. It is time now that we return to our regular jobs at the Iowa Employment Security Commission on a full-time basis. The four thus affected are Jill Quam, Dick Freeman, Jack Spear, and myself. So please do not be offended and do not think we have lost interest in the project if we refer you to Tom or Somsak when you call Task Force headquarters.

The headquarters will still exist . . . the Task Force still exists . . . and I, as Director, still maintain a legal responsibility for the resettlement efforts through a contract with the federal government. However, the location and some of the phone numbers have been changed. Tom Munoz and Somsak Saythongphet

ສົມສັກ ໄຊທອງເພັດ ຈະສືບຕໍ່ວຽກການຂອງ
ສູນການຮັບຮອງຊາວອົບພະຍົບນີ້ໄປອີກຢ່າງເຕັມ
ເວລາ ມີຫ້ອງການຢູ່ຫ້ອງແຜນການວາງແຜນແລະ
ໂຄງການຂອງເຈົ້າຣັດທີ່ທາງຫ້ອງແຜນການໃຫ້
ຢືມເປັນການຊົ່ວຄາວ. ໂທຣະສັບທີ່ບໍ່
ໄດ້ເສັຽຄ່າ (Toll-free phone) ໄດ້ຍົກ
ຍ້າຍໄປຕັ້ງໄວ້ທີ່ຫ້ອງການໃຫມ່ດັ່ງກ່າວ
ແລ້ວ. ເບີໂທຣະສັບຂອງແຕ່ລະຄົນຄືດັ່ງນີ້:
Tom Munoz - 515/281-3912
ສົມສັກ ໄຊທອງເພັດ - 515/281-3958
ເບີໂທຣະສັບທີ່ບໍ່ໄດ້ເສັຽຄ່າ (Toll-free
number) ຍັງມີການເປັນແບບເກົ່າ ຄື
1-800-362-2780.

ນອກຈາກເຈົ້າໜ້າທີ່ດັ່ງກ່າວມາແລ້ວ
ຍັງມີທ່ານ Jerry Nell ອີກຊື່ງທ່ານເອງ
ຈະໄດ້ມາຊ່ວຍກັບການພະຍາບານ
ຊ່ວຍເອົາຄອບຄົວຜູ້ທີ່ຄ້າງຄາຢູ່ມາຮ່ວມກັນ.
ທ່ານ Jerry ເປັນເຈົ້າໜ້າທີ່ຂອງກະຊວງ
ການຕ່າງປະເທດສະຫະຣັດອະເມຣິກາ
ຜູ້ທີ່ເຄີຍໄດ້ໄປຢູ່ປະເທດລາວມາແລ້ວ.
ທາງກະຊວງການຕ່າງປະເທດໄດ້ອະນຸ
ຍາດໃຫ້ທ່ານມາຮັບໃຊ້ໃຫ້ກະຊວງ
ສຶກສາ, ອານາໄມ ແລະສັງຄົມ ຊົ່ວຊາເປັນ
ເວລາຫົກເດືອນ. ທ່ານຈະມີຄວາມ
ຮັບຜິດຊອບຊ່ວຍເຫລືອຊາວອົບພະຍົບ
ທົ່ວໆໄປໃນເຂດສີ່ຣັດດ້ວຍກັນຄື
ຣັດ Iowa, ຣັດ Nebraska, ຣັດ
Kansas, ແລະຣັດ Missouri, ແຕ່ວ່າ
ຫ້ອງການຂອງລາວຈະຢູ່ Des Moines
ທີ່ OPP Building ຮ່ວມກັບຍາ Tom
ແລະຍາ ສົມສັກ. ເບີໂທຣະສັບຂອງ
ເພິ່ນຄື: 515/281-3944. ພວກເຮົາ
ກະວ່າຈະຮ້ອງຂໍໃຫ້ທ່ານ Jerry ໃຊ້ເວລາ
ສ່ວນຫລາຍຂອງລາວ ພະຍາຍາມຊ່ວຍ
ເຫລືອໂຄງການເອົາພີ່ນ້ອງໄດ້ມາຮ່ວມກັນ.

ສ່ວນເຈົ້າໜ້າທີ່ຊາວໄທດຳ ສາມທ່ານ
ຄື ຍາ ກ່າອຶງ, ຍາ ບັກກຳຮຸ່ງ, ຍາ ບັກກຳ
ຟ້າຫລວງ ນັ້ນຍັງຢູ່ນຳສູນການຄືເກົ່າ ແຕ່
ວ່າເຂົາເຈົ້າເອງກໍພວມຈະຊອກວຽກການ

will continue the Task Force work on a full-time basis, operating out of office space donated by the Governor's Office for Planning and Programming. The toll-free phone has been moved to that location.

The phone numbers are as follows:

Tom Munoz - 515/281-3912

Somsak Saythongphet - 515/281-3958

The toll-free number remains the same - 1-800-362-2780.

A new name will be added to the roster of those assisting in the resettlement effort. That is Jerry Nell. Jerry is a State Department employee, repatriated from Laos, who is being loaned to the Department of HEW for six months. He will have responsibilities throughout this four-state region (Iowa, Nebraska, Kansas, Missouri) but will office in Des Moines at OPP with Tom and Somsak. His phone number is 515/281-3944. We plan to request that Jerry spend most of the time he has to devote to Iowa to the Family Reunification program.

The three Tai Dam Task Force employees (Cam Uynh, Baccam Houng, Baccam Faluang) are still with us, but they are in the process of locating other employment and they will be leaving the Task Force as this occurs.

It is difficult for us to remove ourselves from the close, day in and day out involvement in this rewarding endeavor, even though we

[illegible]

sometimes worked to the point of exhaustion, but this follows the plan of the entire program. In like manner, the necessity for sponsors and refugees to remain constantly involved with one another is diminishing. But that doesn't mean that the strong emotional bonds will lessen in any way. We have all participated in a great human adventure and I know the ties of friendship will endure.

I have told some of you to read this issue of the newsletter to find out how to proceed with your plans to sponsor relatives of the Iowa Tai Dam so they may come out from the refugee camp at Nong Khai, Thailand, to be resettled here in Iowa.

Unfortunately, we haven't been able to acquire the information we wanted, despite repeated attempts to reach the right people in Washington. I blame no one, but we are surely experiencing a morass of red tape! Everyone we talk to is personally interested but they are not able to offer specific advice. We have learned of a number of alternatives to try -- and we intend to try them all.

We have been told we shouldn't be too optimistic; my answer to that is that we will just keep trying! No one can convince me that the poor souls in that camp in Thailand are going to be ignored by this government which was so compassionate just a few months ago.

ຊີ່ນບໍ່ເທົ່າໃດເດືອນມານີ້ເທົ່ານັ້ນ.

ໃນເວລານີ້, ຂໍໃຫ້ແຕ່ສົ່ງລາຍຊື່ຂອງແຕ່ລະບຸກຄົນໃນຄອບຄົວ (ຊື່ແລະນາມສະກຸນ, ວັນ, ປີເກີດ, ແລະປະວັດຕ່າງໆຂອງແຕ່ລະບຸກຄົນ), ຊື່, ບ່ອນຢູ່, ເບີໂທລະສັບຜູ້ຮັບຮອງ ມາຍັງພວກຂ້າພະເຈົ້າ.

ພວກຂ້າພະເຈົ້າຈະຮວບຮວມຂັ້ນຊື່ແລ້ວສົ່ງໄປຍັງ Washington ແລະ Bangkok.

ມື້ນີ້ເອງຂ້າພະເຈົ້າໄດ້ຮັບຄໍາຕອບທາງການຈາກ Washington ມາວ່າ "ເຣື່ອງການມາຮ່ວມຂອງຊາວໄທດໍາ ຈໍານວນປະມານ 2000 ຄົນທີ່ຍັງຄ້າງຄາຢູ່ປະເທດໄທນັ້ນ ປະຈຸບັນນີ້ກໍາລັງຢູ່ໃນຂັ້ນພິຈາຣະນາ ແລະລໍຖ້າຄວາມກະຈ່າງແຈ້ງຈາກຫ້ອງການອົພຍົບ ແລະຍົກຍ້າຍ."

ຂ້າພະເຈົ້າຄິດວ່າມັນເປັນພຽງແຕ່ເຣື່ອງຂອງຣັຖສະພາຈະຊີ້ທາງໃຫ້ Attorney General ໄດ້ເພີ້ມຈໍານວນຊາວອົພຍົບອີກເທົ່ານັ້ນ.

ພວກເຮົາຈະບໍ່ຢຸດແຕ່ເທົ່ານີ້.

Colleen Shearer
(ໂຄລີນ ເຊັຽເຣີ)

## ປ່ຽນບ່ອນຢູ່ໃໝ່

ຄອບຄົວ ນິງກໍ່ປີງ ໄດ້ຂຽນໜັງສືມາບອກພວກຂ້າພະເຈົ້າວ່າ ເຂົາເຈົ້າໄດ້ຍ້າຍບ່ອນຢູ່ໃໝ່ດັ່ງນີ້: West on 795
East 8th Street
Garner, Iowa 50438

ໂທຣ. 515/923-3444.

ພວກທ່ານອາດຢາກຈະແກ້ບ່ອນຢູ່ໃໝ່ນີ້ໃສ່ບັນຊີລາຍຊື່ແລະບ່ອນຢູ່ທີ່ພວກຂ້າພະເຈົ້າໄດ້ສົ່ງໃຫ້ແລ້ວໃນຂ່າວສານສະບັບແລກ.

In the meantime, continue to send us the family lists (including complete names, dates of birth, and any other information about the individuals) and the names, addresses and phone numbers of the sponsors. We will compile this information and forward it to Washington and to Bangkok.

By the way, following is the official response received today from Washington, D.C.:

"Reunification of the remaining 2,000 Tai Dam in Thailand is currently undergoing review and awaiting clarification from the Office of Refugee Migration."

I guess it's a matter of Congress directing the Attorney General to extend the parole status to any additional refugees.

We won't give up.

Colleen Shearer

## ADDRESS CHANGE

Ning Ko Ping has written to tell us that his new address is: West on 795
East 8th Street
Garner, Iowa 50438

His phone number is: 515/923-3444.

You may want to insert this address change into the listing we sent you in the last newsletter.

GOVERNOR'S TASK FORCE
FOR INDOCHINESE RESETTLEMENT
1000 EAST GRAND
DES MOINES, IOWA 50319

DES MOINES
JAN 12 '76
U.S. POSTAGE
13
P.B. METER 323201

State Library
Historical Bldg.
Des Moines, Iowa 50319